**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນວິສາຫະກິດ

0010----

ເລກທີ /ກທວ

ນະຄອນຫຼວງວຽງຈັນ, ວັນທີ09 ມັງກອນ 2025

## ແຈ້ງການ

**ເຖິງ :** ບັນດາພາກລັດ ແລະ ເອກະຊົນ, ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ.

**ເລື່ອງ :** ຄວາມຫລ້າຊ້າໃນການອະນຸມັດເອກະສານແຈ້ງຂຶ້ນ ແລະ ປ່ຽນແປງເນື້ອໃນໃບທະບຽນວິສາຫະກິດໃນຂອບເຂດທົ່ວປະເທດໃນຊ່ວງໄລຍະກວດສອບຄວາມສົມບູນຂອງລະບົບ ໂດຍການເລີ່ມທົດລອງນຳໃຊ້ລະບົບທະບຽນວິສາຫະກິດທາງເອເລັກໂຕຣນິກ (eBRS).

- ອີງຕາມ ມາດຕາ17ຂອງກົດໝາຍວ່າດ້ວຍວິສາຫະກິດສະບັບເລກທີ 33/ສພຊ,ລົງວັນທີ29 ທັນວາ 2022;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມທະບຽນວິສາຫະກິດ, ສະບັບເລກທີ 2078/ອຄ, ລົງວັນທີ 15 ພະຈິກ 2023;
- ອີງຕາມ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດວຽກງານທະບຽນວິສາຫະກິດ ສະບັບເລກທີ 2406/ອຄ, ລົງວັນທີ 22 ທັນວາ 2023;

ກົມທະບຽນວິສາຫະກິດ,ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງມາຍັງທ່ານຊາບວ່າປະຈຸບັນກົມທະບຽນວິສາຫະກິດໄດ້ສຳເລັດພັດທະນາລະບົບທະບຽນວິສາຫະກິດທາງເອເລັກໂຕຣນິກ (eBRS) ເຊິ່ງຢູ່ໃນຊ່ວງກວດສອບຄວາມສົມບູນຂອງລະບົບ ໂດຍການເລີ່ມທົດລອງນຳໃຊ້ເລີ່ມແຕ່ວັນທີ 09 ທັນວາ 2024 ເປັນຕົ້ນມາ, ຊຶ່ງໃນການແຈ້ງຂຶ້ນທະບຽນໃໝ່ ແລະ ການປ່ຽນແປງເນື້ອໃນວິສາຫະກິດ, ລະບົບ eBRS ຮຽກຮ້ອງໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດຕ້ອງປະກອບຂໍ້ມູນໃຫ້ຄົບຖ້ວນຊັດເຈນລວມທັງການສະແກນຂໍ້ມູນເອກະສານກ່ຽວຂ້ອງເຂົ້າໃນລະບົບທັງໝົດ.

ສະນັ້ນ, ກົມທະບຽນວິສາຫະກິດ ຈຶ່ງຂໍອະນຸຍາດແຈ້ງມາຍັງທ່ານເພື່ອຊາບວ່າ ໄລຍະເວລາໃນການອະນຸມັດເອກະສານແຈ້ງຂຶ້ນທະບຽນໃໝ່ ແລະ ປ່ຽນແປງເນື້ອໃນໃບທະບຽນວິສາຫະກິດໃນຂອບເຂດທົ່ວປະເທດອາດຈະມີຄວາມຫລ້າຊ້າ, ບໍ່ເປັນໄປຕາມໄລຍະເວລາທີ່ກົດໝາຍກຳນົດໄວ້. ໃນໄລຍະນີ້, ກົມທະບຽນວິສາຫະກິດຈຶ່ງຂໍຄວາມຮ່ວມມື ແລະ ຄວາມເຫັນໃຈມາຍັງບັນດາທ່ານດ້ວຍ.

ກົມທະບຽນວິສາຫະກິດ ຂໍອະໄພມາຍັງບັນດາທ່ານໃນຄວາມບໍ່ສະດວກມານະໂອກາດນີ້ດ້ວຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

**ຫົວໜ້າກົມ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນວິສາຫະກິດ

**ອະພິສິດ ແສງສຸລິວົງ**

Scanned with CamScanner